ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 1758/ກປ

ນະຄອນຫຼວງວຽງຈັນ, ວັນທີ 30/07/18

# ຄຳແນະນຳ

## ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2018 ວ່າດ້ວຍການເພີ່ມທະວີການຄຸ້ມຄອງການນຳໃຊ້ເນື້ອທີ່ດິນ ເພື່ອສຳປະທານປູກໄມ້ອຸດສາຫະກຳ ແລະ ພືດຕ່າງໆ ໃນຂອບເຂດທົ່ວປະເທດ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2018 ວ່າດ້ວຍການເພີ່ມທະວີການຄຸ້ມຄອງການນຳໃຊ້ເນື້ອທີ່ດິນ ເພື່ອສຳປະທານປູກໄມ້ອຸດສາຫະກຳ ແລະ ພືດຕ່າງໆ ໃນຂອບເຂດທົ່ວປະເທດ.
- ອີງຕາມ ໜັງສືສະເໜີຂອງກົມນະໂຍບາຍ ແລະ ນິຕິກຳ ເລກທີ 353/ກນບ, ລົງວັນທີ 24/7/ 2018.

ເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂອງ ຄຳສັ່ງເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2018 ວ່າດ້ວຍການເພີ່ມທະວີການຄຸ້ມຄອງການນຳໃຊ້ເນື້ອທີ່ດິນ ເພື່ອສຳປະທານປູກໄມ້ອຸດສາຫະກຳ ແລະ ພືດຕ່າງໆໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ມີຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ, ມີປະສິດທິພາບ ແລະ ປະສິດທິຜົນສູງນັ້ນ,

## ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກຄຳແນະນຳ:

### I. ຈຸດປະສົງ ແລະ ລະດັບຄາດໝາຍ

1. ເພື່ອແນະນຳວິທີການຈັດຕັ້ງປະຕິບັດເນື້ອໃນຂອງຄຳສັ່ງເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2018 ວ່າດ້ວຍການເພີ່ມທະວີການຄຸ້ມຄອງການນຳໃຊ້ເນື້ອທີ່ດິນ ເພື່ອສຳປະທານປູກໄມ້ອຸດສາ ຫະກຳ ແລະ ພືດຕ່າງໆ ໃນຂອບເຂດທົ່ວປະເທດ ມີຄວາມຮັບຮູ້, ເຂົ້າໃຈເປັນເອກະພາບ ;
2. ເພື່ອໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານງານກັບ ກະຊວງ, ຂະແໜງການ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ນັບແຕ່ຂັ້ນແຂວງ ຈົນຮອດເມືອງ ແລະ ບ້ານໃນການຈັດຕັ້ງປະຕິບັດຄຳສັ່ງດັ່ງກ່າວ ດ້ວຍຄວາມຮັບຜິດຊອບສູງ, ເຮັດໃຫ້ການຄຸ້ມຄອງການ

ນໍາໃຊ້ດິນ ເພື່ອສໍາປະທານປູກໄມ້ອຸດສາຫະກໍາ, ກ້ອຍ ແລະ ພືດເສດຖະກິດອື່ນ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ ;

3. ເພື່ອແບ່ງຄວາມຮັບຜິດຊອບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ໃນການຊຸກຍູ້ສົ່ງເສີມ, ຄຸ້ມຄອງ,ຕິດຕາມ ແລະ ກວດກາການລົງທຶນປູກໄມ້ອຸດສາຫະກໍາ, ກ້ອຍ ແລະ ພືດເສດຖະກິດອື່ນ ໃຫ້ລະ ອຽດຈະແຈ້ງ, ມີຈຸດສຸມ, ຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ດ້ານເສດຖະກິດ-ສັງຄົມ ຕາມທິດສີຂຽວແລະຍືນຍົງ.

## II. ເນື້ອໃນ

### 1. ການປູກໄມ້ອຸດສາຫະກໍາ

1.1. ໃຫ້ ກົມປ່າໄມ້ ສົມທົບກັບ ກົມກວດກາປ່າໄມ້, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກໍາ ສົມທົບກັບ ຂະແໜງການ, ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ, ພະແນກການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ສືບຕໍ່ກວດກາຄືນ ການຈັດຕັ້ງປະຕິບັດຄໍາສັ່ງ ຂອງນາຍົກລັດຖະມົນຕີ ເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012 ໂດຍສຸມໃສ່ແກ້ໄຂບັນຫາຄົງຄ້າງໃນການສໍາປະທານທີ່ດິນຂອງລັດ ເພື່ອປູກຢາງພາລາ ແລະ ໄມ້ວິກ ໃນໄລຍະຜ່ານມາ ໃຫ້ຕົກໄປຢ່າງຂາດຕົວ ແນໃສ່ຫັນການການນໍາໃຊ້ ແລະຄຸ້ມຄອງທີ່ດິນຂອງລັດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ລວມໝູ່ ໃຫ້ເຂົ້າສູ່ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ ;

1.2. ໃຫ້ ກົມປ່າໄມ້ ແລະ ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຢຸດຕິການຄົ້ນຄວ້າພິຈາລະນາກ່ຽວກັບການສະເໜີຂໍອະນຸຍາດເຊົ່າ ຫຼື ສໍາປະທານທີ່ດິນຂອງລັດ ເພື່ອລົງທຶນປູກໄມ້ຢາງພາລາຢ່າງເດັດຂາດ. ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນໍາໃຊ້ທີ່ດິນ ທີ່ເປັນກໍາມະສິດຂອງຕົນ ເພື່ອປູກຢາງພາລາ ແມ່ນໃຫ້ສືບຕໍ່ຊຸກຍູ້ສົ່ງເສີມ ຕາມຄວາມເໝາະສົມ ຂອງປະເພດການນໍາໃຊ້ທີ່ດິນ ທີ່ຂະແໜງການກ່ຽວຂ້ອງກໍານົດ ;

1.3. ໃຫ້ ກົມປ່າໄມ້ ສົມທົບກັບ ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງທ້ອງຖິ່ນ ສືບຕໍ່ຊຸກຍູ້ສົ່ງເສີມບັນດາໂຄງການປູກໄມ້ອຸດສາຫະກໍາ ເປັນຕົ້ນ ໄມ້ວິກ, ໄມ້ກະຖິນນະລົງ, ໄມ້ກະຖິນເທພາ, ໄມ້ສັກ, ໄມ້ປ່ອງ, ໄມ້ພັນພື້ນເມືອງອື່ນ ບົນພື້ນຖານຫຼັກການ ດັ່ງນີ້:

1) ການສໍາຫຼວດ ແລະ ກໍານົດເຂດ ປູກໄມ້ ໃຫ້ເລັ່ງໃສ່ທີ່ດິນປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ຕາມທີ່ໄດ້ຈັດສັນໄວ້ ;

2) ການກໍານົດ ແລະ ເລືອກຊະນິດພັນໄມ້ທີ່ຈະປູກ ຕ້ອງອີງໃສ່ເງື່ອນໄຂຂອງດິນຟ້າອາກາດ ຂອງແຕ່ລະທ້ອງຖິ່ນ ;

3) ປ່າປູກທຸກຕອນ ຕ້ອງໄດ້ຂຶ້ນທະບຽນນໍາຂະແໜງການກະສິກໍາ ແລະ ປ່າໄມ້ ເພື່ອຢັ້ງຢືນກໍາມະສິດ, ແຫຼ່ງທີ່ມາຂອງໄມ້ປູກ ແລະ ອໍານວຍຄວາມສະດວກ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ປະຕິບັດນະໂຍບາຍ ສົ່ງເສີມການປູກໄມ້ ຕາມກົດໝາຍ ແລະ ລະບຽບການ ;

4) ການເຊົ່າ ຫຼື ສໍາປະທານທີ່ດິນ ເພື່ອປູກໄມ້ ໃຫ້ດໍາເນີນໃນເຂດທີ່ໄດ້ຈັດສັນໄວ້ເທົ່ານັ້ນ ແລະ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

- ສຶກສາຂໍ້ມູນທາງດ້ານເສດຖະກິດ-ສັງຄົມ, ຄວາມເໝາະສົມທາງທໍາມະຊາດ, ສິດນໍາໃຊ້ ຫຼື ໃຊ້ທີ່ດິນ, ແຮງງານທ້ອງຖິ່ນ, ສໍາຫຼວດສະພາບປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ປຶກສາຫາລືເປັນເອກະພາບກັບປະຊາຊົນທ້ອງຖິ່ນ ແລະ ບັນຫາອື່ນທີ່ຈໍາເປັນ ;
- ສ້າງບົດວິພາກເສດຖະກິດ-ເຕັກນິກ ໂດຍຜ່ານການຮັບຮອງຈາກກົມປ່າໄມ້ ຫຼື ພະແນກກະສິກໍາ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ຕາມຂະໜາດ ແລະ ມູນຄ່າການລົງທຶນ ຂອງໂຄງການ ;

- ສ້າງບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ລວມທັງມາດຕະການແກ້ໄຂຢ່າງເໝາະສົມ ໂດຍການຢັ້ງຢືນຮັບຮອງຈາກຂະແໜງການທີ່ກ່ຽວຂ້ອງ ;
- ສ້າງແຜນດຳເນີນງານໃນການບຸກເບີກເນື້ອທີ່, ການພັດທະນາບ້ານ, ການສົ່ງເສີມປະຊາຊົນມີສ່ວນຮ່ວມ ໃນການດຳເນີນການຜະລິດ, ການນຳໃຊ້ເຕັກໂນໂລຊີ ແລະ ການແບ່ງປັນຜົນປະໂຫຍດ ຕ້ອງຕິດພັນກັບການປົກປັກຮັກສາແຫຼ່ງນ້ຳ ແລະ ສິ່ງແວດລ້ອມ ;

5) ການປູກໄມ້ ເພື່ອເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ ຕ້ອງດຳເນີນໃນເຂດທີ່ໄດ້ຈັດສັນໃຫ້ໂດຍຈະໄດ້ຮັບນະໂຍບາຍຕ່າງໆ ຕາມກົດໝາຍ ແລະ ລະບຽບການ ;

1.4. ໃຫ້ ກົມປ່າໄມ້ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງທ້ອງຖິ່ນ ຊຸ້ນຂ້ຽວສຳຫຼວດ, ຈັດສັນ, ວາງແຜນ ການນຳໃຊ້ ທີ່ດິນປ່າປ້ອງກັນ ແລະ ປ່າສະຫງວນ ໃຫ້ສຳເລັດໂດຍໄວ ດ້ວຍຫຼັກການ ດັ່ງລຸ່ມນີ້:

1) ດຳເນີນການສຳຫຼວດ ແລະ ການກຳນົດພື້ນທີ່ອອກເປັນເຂດກັນຊົນ, ເຂດຄຸ້ມຄອງການນຳໃຊ້, ເຂດຫວງຫ້າມເດັດຂາດ, ເຂດປົກປັກຮັກສາແຫຼ່ງນ້ຳ, ເຂດເຊື່ອມຕໍ່, ເຂດອະນຸລັກຊີວະນາໆພັນ, ເຂດຟື້ນຟູປ່າ ແລະ ເຂດປ່າໄມ້ບ້ານ ຕາມລະບົບການຄຸ້ມຄອງຂອງແຕ່ລະປະເພດປ່າໄມ້ ;
2) ວາງແຜນຈັດສັນ ແລະ ນຳໃຊ້ ທີ່ດິນ ປ່າປ້ອງກັນ ແລະ ປ່າສະຫງວນ ໂດຍການມີສ່ວນຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ອ້ອມຂ້າງ ປ່າປ້ອງກັນ ແລະ ປ່າສະຫງວນ ນັ້ນ ;
3) ຂຶ້ນທະບຽນທີ່ດິນ ປ່າປ້ອງກັນ ແລະ ປ່າສະຫງວນ ;
4) ຄຸ້ມຄອງ, ປົກປັກຮັກສາ ປ່າປ້ອງກັນ ແລະ ປ່າສະຫງວນ ໂດຍການປະຕິບັດ ດັ່ງນີ້:
   - ສຳຫຼວດ, ກຳນົດຂອບເຂດ ແລະ ປັກຫຼັກໝາຍ ບົນພື້ນຖານການເຫັນດີເປັນເອກະພາບ ກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ;
   - ສຳຫຼວດ ເກັບກຳຂໍ້ມູນ ກ່ຽວກັບ ຄຸນລັກສະນະຂອງພື້ນທີ່, ຄວາມຄ້ອຍຊັນ, ແຫຼ່ງນ້ຳ,ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ, ຂໍ້ມູນທາງດ້ານເສດຖະກິດ-ສັງຄົມ ເພື່ອກຳນົດ ເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງການນຳໃຊ້, ເຂດກັນຊົນ ແລະ ເຂດເຊື່ອມຕໍ່ ໃນກໍລະນີທີ່ມີທີ່ຕັ້ງໃກ້ຄຽງກັບປ່າປະເພດອື່ນ ;
   - ສ້າງແຜນທີ່ສະແດງຂອບເຂດ, ທີ່ຕັ້ງ ແລະ ສະພາບປ່າໄມ້ ;
   - ວາງແຜນການ ແລະ ກຳນົດ ມາດຕະການປົກປັກຮັກສາ ແລະ ຟື້ນຟູປ່າ ;
   - ຈັດຕັ້ງປະຕິບັດການຄຸ້ມຄອງເຂດປ່າໄມ້ ຕາມແຜນການ ແລະ ມາດຕະການ ທີ່ໄດ້ກຳນົດໄວ້ ໂດຍມີການເຂົ້າຮ່ວມຂອງປະຊາຊົນໃນທ້ອງຖິ່ນ ;
   - ດຳເນີນການຕິດຕາມ, ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດແຜນການຢ່າງເປັນລະບົບ.

1.5. ໃຫ້ ກົມປ່າໄມ້ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສຳຫຼວດ ແລະ ກຳນົດເຂດປູກໄມ້ໃນເຂດປ່າຜະລິດ ໂດຍເລັ່ງໃສ່ທີ່ດິນປ່າຊຸດໂຊມທີ່ບໍ່ສາມາດຟື້ນຟູໄດ້ໂດຍທຳມະຊາດໃຫ້ລະອຽດຈະແຈ້ງ ເພື່ອໃຫ້ຮູ້ວ່າມີເຂດໃດທີ່ສາມາດຈະດຳເນີນການປູກໄມ້ອຸດສາຫະກຳໄດ້ ຈັດສັນ ແລະ ສົ່ງເສີມການປູກໄມ້ໃຫ້ເປັນສິນຄ້າ, ພ້ອມທັງຄົ້ນຄວ້າ ສ້າງນິຕິກຳກ່ຽວກັບການຈັດສັນແບ່ງປັນລາຍຮັບຈາກການຂາຍໄມ້ປູກຢູ່ໃນເຂດດັ່ງກ່າວ ໂດຍຮັບປະກັນຜົນປະໂຫຍດຂອງລັດ, ຜູ້ປະກອບການ ແລະ ປະຊາຊົນ ;

1.6. ໃຫ້ ກົມປ່າໄມ້ຮັບຮ້ອນ ສົມທົບກັບ ກົມກວດປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງທ້ອງຖິ່ນ ສືບຕໍ່ດຳເນີນການກວດກາ ແລະ ປະເມີນຄືນບັນດາໂຄງການລົງທຶນປູກໄມ້ອຸດສາຫະກຳ ທີ່ໄດ້ຮັບອະນຸຍາດ ຈາກສູນກາງ ແລະ ທ້ອງຖິ່ນ ໃນໄລຍະຜ່ານມາ ດັ່ງນີ້:

1) ໂຄງການລົງທຶນປູກໄມ້ອຸດສະຫະກຳ ທີ່ກວມເອົາເນື້ອທີ່ດິນຂອງ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ທີ່ເຫັນວ່າບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ລວມທັງການປະຕິບັດພັນທະຕ່າງໆ ແມ່ນໃຫ້ດຳເນີນມາດຕະການ ຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ ພ້ອມທັງສະຫຼຸບລາຍງານ ກະຊວງກະສິກຳ ແລະ ປ່າໄມ້ ຮັບຊາບໃນ ປີ 2018 ;
2) ສຳລັບ ການເຊົ່າ ຫຼື ສຳປະທານທີ່ດິນລັດ ເພື່ອປູກໄມ້ ທີ່ໄດ້ເຊັນສັນຍາແລ້ວ ລວມທັງການລົງທຶນຮູບແບບ 2+3 ທີ່ເຫັນວ່າ ມີຊ່ອງຫວ່າງ ຫຼື ບໍ່ຮັດກຸມ ກໍຕ້ອງໄດ້ພິຈາລະນາ ແລະ ເຈລະຈາຄືນ ເພື່ອຮັບປະກັນຜົນປະໂຫຍດ ຂອງລັດ, ຜູ້ປະກອບການ ແລະ ປະຊາຊົນ.

**2. ການປູກກ້ວຍ ແລະພືດເສດຖະກິດອື່ນ**

2.1. ໃຫ້ ກົມປູກຝັງ ສົມທົບກັບ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການກວດກາບັນດາໂຄງການເຊົ່າ ຫຼື ສຳປະທານທີ່ດິນ ເພື່ອປູກກ້ວຍ ແລະ ພືດກະສິກຳອື່ນ ດັ່ງນີ້:

1) ໂຄງການລົງທຶນໃນໄລຍະຜ່ານມາ ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຕາມກົດໝາຍ ແມ່ນໃຫ້ສືບຕໍ່ຊຸກຍູ້, ຕິດຕາມ, ກວດກາ ແລະ ຈັດທະບຽນພື້ນທີ່ປູກ, ສະຖານທີ່ຫຸ້ມຫໍ່ຜະລິດພັນ, ສະຖານທີ່ເກັບຮັກສາ, ການນຳໃຊ້ຝຸ່ນ, ຢາປາບສັດຕູພືດ ໃຫ້ຖືກຕ້ອງຕາມເຕັກນິກວິຊາການ, ລະບຽບການ ແລະ ມາດຕະການສຸຂານາໄມພືດ ຕາມເງື່ອນໄຂການນຳເຂົ້າຂອງປະເທດປາຍທາງ. ສຳລັບໂຄງການທີ່ບໍ່ໄດ້ຮັບອະນຸຍາດ ຫຼື ດຳເນີນການບໍ່ຖືກຕ້ອງຕາມລະບຽບກົດໝາຍ, ນຳໃຊ້ຢາປາບສັດຕູພືດທີ່ຍົກເລີກນຳໃຊ້ໃນ ສປປ ລາວ ແມ່ນໃຫ້ຊອກຫາມາດຕະການ ແລະ ວິທີການແກ້ໄຂທີ່ເໝາະສົມໃນແຕ່ລະທ້ອງຖິ່ນ ບົນພື້ນຖານລະບຽບກົດໝາຍ ;
2) ໂຄງການລົງທຶນໃໝ່ ໃຫ້ປະກອບບົດວິພາກເສດຖະກິດ-ເຕັກນິກການປູກພືດ ໂດຍຜ່ານການຢັ້ງຢືນຈາກ ກົມປູກຝັງ ຫຼື ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ຕາມຂະໜາດ ແລະ ມູນຄ່າການລົງທຶນ ພ້ອມທັງປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຢ່າງເຂັ້ມງວດ ;

2.2. ໃຫ້ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ສົມທົບກັບ ກົມປູກຝັງ, ກົມລ້ຽງສັດ ແລະ ການປະມົງ, ພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ສຳຫຼວດ ແລະ ກຳນົດເຂດປູກພືດກະສິກຳ, ເຂດລ້ຽງສັດທີ່ເປັນເສດຖະກິດ ແລະ ເປັນທ່າແຮງຂອງແຕ່ລະທ້ອງຖິ່ນ ເພື່ອສົ່ງເສີມການຜະລິດເປັນສະບຽງອາຫານ ແລະ ສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ;

2.3. ໃຫ້ ກົມປູກຝັງ ສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ຄົ້ນຄວ້າ, ວິເຄາະ ແລະ ວິໄຈ ການລົງທຶນຂອງບັນດາບໍລິສັດປູກກ້ວຍ ແລະ ພືດກະສິກຳອື່ນ ໃນຮູບແບບການເຊົ່າ ຫຼື ສຳປະທານທີ່ດິນລັດ ແລະ ທີ່ດິນຂອງບຸກຄົນ ໃຫ້ໄປຕາມມາດຕະຖານກະສິກຳທີ່ດີ ແລະ ເງື່ອນໄຂການນຳເຂົ້າຂອງປະເທດປາຍທາງ ;

2.4. ໃຫ້ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ສົມທົມກັບ ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ຂະແໜງການກ່ຽວຂ້ອງຂັ້ນທ້ອງຖິ່ນ ດຳເນີນການກວດກາປະເມີນຜົນບັນດາໂຄງການປູກກ້ວຍ ດັ່ງນີ້:

1) ບັນດາໂຄງການປູກກ້ວຍທີ່ໝົດສັນຍາ ຫຼື ໄດ້ຈັດຕັ້ງປະຕິບັດໄປແລ້ວ ແມ່ນໃຫ້ກວດກາພື້ນທີ່ປູກກ້ວຍຢ່າງລະອຽດ ເພື່ອປັບປຸງ ແລະ ຟື້ນຟູດິນຄືນໃຫ້ຢູ່ໃນສະພາບເດີມ ແລະ ປູກພືດອື່ນທີ່ເໝາະສົມກວ່າ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ;

2) ບັນດາໂຄງການທີ່ກຳລັງຈັດຕັ້ງປະຕິບັດ ຫຼື ໂຄງການລົງທຶນໃໝ່ ແມ່ນໃຫ້ເອົາໃຈໃສ່ກວດກາສັນຍາເຊົ່າ ຫຼື ສຳປະທານທີ່ດິນ ໃຫ້ລະອຽດຈະແຈ້ງ ໂດຍເຈົ້າຂອງໂຄງການ ຫຼື ບໍລິສັດ ເປັນຜູ້ຮັບຜິດຊອບໃນການຟື້ນຟູທີ່ດິນ ແລະ ປັບປຸງບຳລຸງດິນຄືນ ໃຫ້ຢູ່ໃນສະພາບເດີມ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ ;

2.5. ໃຫ້ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ສົມທົບກັບ ກົມປ່າໄມ້, ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງທ້ອງຖິ່ນ ກວດກາຄືນ ບັນດາໂຄງການລົງທຶນພັດທະນາກະສິກຳທີ່ມີໃນປະຈຸບັນທີ່ກວມເອົາເຂດຫວງຫ້າມ ໂດຍສະເພາະໃນ 3 ປະເພດປ່າ ທີ່ເຫັນວ່າບໍ່ສອດຄ່ອງກັບລະບຽບກົດໝາຍ ແມ່ນໃຫ້ມີມາດຕະການ ຢ່າງເຂັ້ມງວດ ;

2.6. ໃຫ້ ກົມປູກຝັງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ສົມທົບກັບ ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການຈັດຕັ້ງປະຕິບັດການຄຸ້ມຄອງປັດໄຈການຜະລິດ ດັ່ງນີ້:

1) ກວດກາການນຳເຂົ້າ, ການຈຳໜ່າຍ, ການເກັບຮັກສາ ແລະ ການນຳໃຊ້ຢາປາບສັດຕູພືດໃນແຕ່ລະທ້ອງຖິ່ນ ໃຫ້ຖືກຕ້ອງຕາມເຕັກນິກວິຊາການ ແລະ ໃຫ້ສອດຄ່ອງກັບດຳລັດວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017 ;

2) ກວດກາ ການນຳເຂົ້າ, ການຈຳໜ່າຍ, ການເກັບຮັກສາ ແລະ ການນຳໃຊ້ຝຸ່ນໃນແຕ່ລະທ້ອງຖິ່ນ ໃຫ້ຖືກຕ້ອງຕາມເຕັກນິກວິຊາການ ແລະ ສອດຄ່ອງກັບຂໍ້ຕົກລົງວ່າດ້ວຍການຄຸ້ມຄອງຝຸ່ນ ສະບັບເລກທີ 2169/ກປ, ລົງວັນທີ 10 ຕຸລາ 2013 ;

3) ກວດກາ ການນຳເຂົ້າ, ການຈຳໜ່າຍ, ການເກັບຮັກສາ ແລະ ການນຳໃຊ້ ແນວພັນພືດໃນແຕ່ລະທ້ອງຖິ່ນ ໃຫ້ຖືກຕ້ອງຕາມເຕັກນິກວິຊາການ ແລະ ສອດຄ່ອງກັບຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ແນວພັນພືດ ສະບັບເລກທີ 3919/ກປ, ລົງວັນທີ 12 ທັນວາ 2012 ແລະ ຄຳສັ່ງກ່ຽວກັບການເພີ່ມທະວີຄວາມເຂັ້ມງວດຕໍ່ການສະກັດກັ້ນ, ເຝົ້າລະວັງ ແລະ ກຳຈັດພະຍາດຫ່ຽວເຫຼືອງກ້ວຍ ສະບັບເລກທີ0827/ກປ, ລົງວັນທີ05 ເມສາ 2018.

## III. ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດ

1. ໃຫ້ ກົມປ່າໄມ້, ກົມປູກຝັງ, ກົມກວດກາປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ເປັນເຈົ້າການສົມທົບກັບອົງການປົກຄອງທ້ອງຖິ່ນ ໂຄສະນາ ເຜີຍແຜ່ ແລະ ເຊື່ອມຊຶມ ຄຳແນະນຳສະບັບນີ້ໃຫ້ທົ່ວເຖິງ ແລະ ລົງເລິກເຖິງຂັ້ນຮາກຖານກຸ່ມບ້ານ ແລະ ບ້ານເພື່ອຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ;
2. ມອບໃຫ້ ກົມປ່າໄມ້, ກົມປູກຝັງ ແລະ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ແຕ່ງຕັ້ງຄະນະວິຊາການສະເພາະກິດ ເພື່ອຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຕາມພາລະບົດບາດຂອງຕົນ ພ້ອມທັງອອກຄຳແນະນຳ, ຄູ່ມືທາງດ້ານວິຊາການ ເປັນອັນລະອຽດ ເພື່ອເປັນບ່ອນອີງໃນການ ຊຸກຍູ້ ແລະ ສົ່ງເສີມການປູກໄມ້ອຸດສາ ຫະກຳ, ປູກກ້ວຍ ແລະ ປູກພືດກະສິກຳ ໃຫ້ຂະຫຍາຍຕົວ ຢ່າງແຂງແຮງ ;
3. ມອບໃຫ້ ຄະນະຮັບຜິດຊອບຄົ້ນຄວ້າຈັດຕັ້ງປະຕິບັດຄຳສັ່ງເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2018 ສົມທົບກັບ ຂະແໜງການການກ່ຽວຂ້ອງ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການປົກຄອງທ້ອງຖິ່ນ ນັບແຕ່ຂັ້ນແຂວງ ລົງຮອດເມືອງ ແລະ ບ້ານ ທີ່ກ່ຽວຂ້ອງ ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຢ່າງເຂັ້ມງວດ ແລະ ລາຍງານການນຳຂະຊວງ ເປັນແຕ່ລະໄລຍະ ເພື່ອແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນ ໃຫ້ທັນກັບສະພາບການ ;

4. ມອບໃຫ້ ກົມນະໂຍບາຍ ແລະ ນິຕິກຳ, ກົມປ່າໄມ້, ກົມປູກຝັງ, ກົມກວດປ່າໄມ້, ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຂຶ້ນແຜນງົບປະມານ ແລະ ນຳໃຊ້ແຫຼ່ງທຶນຕ່າງໆທີ່ຖືກຕ້ອງຕາມລະບຽບກົດໝາຍ ເພື່ອຈັດຕັ້ງປະຕິບັດແຜນເຄື່ອນໄຫວວຽກໄດ້ກຳນົດໄວ້ໃນການຈັດຕັ້ງຜັນຂະຫຍາຍຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ ;

5. ມອບໃຫ້ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ເປັນເຈົ້າການຊີ້ນຳ-ນຳພາຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ພ້ອມທັງສະຫຼຸບລາຍງານ ໃຫ້ ກົມນະໂຍບາຍ ແລະ ນິຕິກຳ ໃນຖານະເປັນໃຈກາງປະສານງານຂອງຄະນະສະເພາະກິດເພື່ອສັງລວມລາຍງານກະຊວງກະສິກຳ ແລະ ປ່າໄມ້ຢ່າງເປັນປົກກະຕິ ;

6. ມອບໃຫ້ ກົມນະໂຍບາຍ ແລະ ນິຕິກຳ ເປັນຜູ້ປະຈຳການຂອງຄະນະຮັບຜິດຊອບຄົ້ນຄວ້າຈັດຕັ້ງປະຕິບັດຄຳສັ່ງເລກທີ 09/ນຍ, ລົງວັນທີ 02 ກໍລະກົດ 2018 ເພື່ອເຮັດໜ້າທີ່ຊຸກຍູ້, ປະສານງານ, ຕິດຕາມ, ກວດກາ, ພ້ອມທັງສະຫຼຸບລາຍງານການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ແກ່ ກະຊວງກະສິກຳ ແລະ ປ່າໄມ້ ໃນແຕ່ລະໄລຍະ ;

7. ໃນເວລາຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຫາກມີບັນຫາຫຍຸ້ງຍາກປະການໃດ ໃຫ້ລາຍງານ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອມີມາດຕະການ ແລະ ວິທີການປັບປຸງແກ້ໄຂຢ່າງທັນການ.

ດັ່ງນັ້ນ, ຈຶ່ງອອກຄຳແນະນຳສະບັບນີ້ ເພື່ອພ້ອມກັນຈັດຕັ້ງປະຕິບັດ ດ້ວຍຄວາມຮັບຜິດຊອບສູງ.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້**

ປອ.ລຽນ ທິແກ້ວ

<u>ບ່ອນນຳສົ່ງ:</u>

1. ຫສນຍ 01 ສະບັບ (ໃຊ້ຕາງລາຍງານ);
2. ກ/ຊ ແຜນການ ແລະ ການລົງທຶນ 01 ສະບັບ (ເພື່ອຊາບ);
3. ກ/ຊ ການເງິນ 01 ສະບັບ (ເພື່ອຊາບ)
4. ກ/ຊ ອຸດສາຫະກຳແລະການຄ້າ 01 ສະບັບ (ເພື່ອຊາບ);
5. ເກັບຮັກສາໄວ້ 01 ສະບັບ.